ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----===000===-----

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 194 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 28 ມີນາ 2017

ຫ້ອງການ ລຄຊ
0257
3.0.MAR.2017
ໂທລະສັບ 021 217770

# ແຈ້ງການ

ເຖິງ: - ບັນດາກົມ ແລະ ທຽບເທົ່າກົມພາຍໃນທະນາຄານແຫ່ງ ສປປ ລາວ;

- ທະນາຄານແຫ່ງ ສປປ ລາວ ປະຈຳພາກເໜືອ, ພາກກາງ ແລະ ພາກໃຕ້;

- ທະນາຄານທຸລະກິດທົ່ວລະບົບ;

ເລື່ອງ: ວັນພັກຊົດເຊີຍ ປີໃໝ່ລາວ ປະຈຳປີ ພສ 2560.

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 430/ຫສນຍ.ກລຂ, ລົງວັນທີ 21/03/2017.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ: ທາງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄດ້ແຈ້ງມາຍັງບັນດາກະຊວງ/ອົງການ ກ່ຽວກັບການຈັດຕັ້ງສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2560 ແມ່ນກົງກັບວັນທີ 14, 15, 16 ເມສາ 2017 (ວັນສຸກ, ວັນເສົາ ແລະ ວັນອາທິດ) ແຕ່ເນື່ອງຈາກວ່າວັນທີ 15 ແລະ 16 ເມສາ 2017 ແມ່ນຖືກວັນເສົາ ແລະ ວັນອາທິດ ຊຶ່ງເປັນວັນພັກລັດຖະການ ຈຶ່ງກຳນົດເອົາ ວັນທີ 13 ແລະ 17 ເມສາ 2017 (ວັນພະຫັດ ແລະ ວັນຈັນ) ເປັນວັນພັກຊົດເຊີຍ ແລະ ໃຫ້ເລີ່ມປະຕິບັດວຽກງານປົກກະຕິ ຕັ້ງແຕ່ວັນທີ 18 ເມສາ 2017 ເປັນຕົ້ນໄປ. ພ້ອມນີ້ໃຫ້ຈັດຕັ້ງສະເຫຼີມສະຫຼອງປີໃໝ່ໃຫ້ຖືກຕ້ອງຕາມຮີດຄອງປະເພນີ ແລະ ບົນຈິດໃຈປະຢັດມັດທະຍັດ. ພ້ອມທັງ, ໃຫ້ບັນດາທະນາຄານຕ່າງໆເອົາໃຈໃສ່ຊີ້ນຳວຽກງານຮັກສາຄວາມປອດໄພຂອງສຳນັກງານຂອງຕົນ ໃນໄລຍະຕະຫຼອດປີໃໝ່ໃຫ້ມີຄວາມສະຫງົບ ໂດຍແບ່ງຄວາມຮັບຜິດຊອບໃນການຕິດຕາມ, ກວດກາເວນຍາມ ແລະ ປະຈຳການປົກກະຕິ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ